# ຄວາມຄືບໜ້າໃນການກະກຽມຫຼຸດພົ້ນອອກຈາກ ສະຖານະພາບດ້ອຍພັດທະນາ ແລະ ການຈັດຕັ້ງປະຕິບັດແຜນດຳເນີນງານ ໂດຮາ ສຳລັບປະເທດດ້ອຍພັດທະນາ ຂອງ ສປປ ລາວ.

ນຳສະເໜີໂດຍ: ທ່ານ ອານຸພາບ ວົງໜໍ່ແກ້ວ, ຮອງລັດຖະມົນຕີ ກະຊວງການຕ່າງປະເທດ

ກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ປີ 2025

ວັນທີ 19 ພະຈິກ 2025, ນະຄອນຫຼວງວຽງຈັນ

# ເນື້ອໃນນຳສະເໜີ

1. ຄວາມເປັນມາ.
2. ສະພາບເສດຖະກິດ ແລະ ການພັດທະນາຂອງ ສປປ ລາວ ໂດຍຫຍໍ້.
3. ການຈັດຕັ້ງປະຕິບັດວຽກງານປະເທດດ້ອຍພັດທະນາ (LDCs) ໄລຍະຜ່ານມາ.
   - ການຈັດຕັ້ງປະຕິບັດແຜນຍຸດທະສາດການຂ້າມຜ່ານ ຂອງ ສປປ ລາວ ເພື່ອອອກຈາກສະຖານະພາບດ້ອຍພັດທະນາ ໃນປີ 2026 ແລະ ຫຼັງປີ 2026.
   - ຄາດຄະເນຜົນກະທົບຫຼັງ ສປປ ລາວ ອອກຈາກ LDCs.
4. ການຈັດຕັ້ງປະຕິບັດແຜນດຳເນີນງານ ໂດຮາ ສຳລັບປະເທດດ້ອຍພັດທະນາ ຂອງ ສປປ ລາວ.
5. ທິດທາງໃນຕໍ່ໜ້າ ແລະ ຂໍ້ສະເໜີຕໍ່ກັບບັນດາຄູ່ຮ່ວມພັດທະນາ.

# 1. ຄວາມເປັນມາ

- ໃນປີ 1971, ສະຫະປະຊາຊາດ ໄດ້ຮັບຮູ້ປະເທດດ້ອຍພັດທະນາ (LDCs) ຢ່າງເປັນທາງການ ໂດຍໄດ້ກໍານົດເອົາບັນດາປະເທດທີ່ມີລະດັບລາຍຮັບໄດ້ຕໍ່າ ແລະ ປະເຊີນກັບອຸປະສັກທາງດ້ານໂຄງສ້າງຢ່າງໜັກໜ່ວງຕໍ່ກັບການພັດທະນາແບບຍືນຍົງ ເຂົ້າໃນບັນຊີປະເທດດ້ອຍພັດທະນາ,ໃນນັ້ນລວມທັງ ສປປ ລາວ.
- ນັບແຕ່ຊຸມປີ 2000 ເປັນຕົ້ນມາ, ສປປ ລາວ ໄດ້ຖືເປັນບູລິມະສິດແຫ່ງຊາດໃນການລຶບລ້າງຄວາມທຸກຍາກ, ວາງຄາດໝາຍສູ້ຊົນ ແລະ ສຸມທຸກຄວາມພະຍາຍາມ ນໍາພາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ.
- ມາຮອດປີ 2018, ສປປ ລາວ ຜ່ານເກນມາດຖານ 2 (GNI, HAI) ໃນ 3 ເງື່ອນໄຂ ໄດ້ເປັນເທື່ອທໍາອິດ ແລະ ປີ 2021 ສາມາດຜ່ານເກນໄດ້ເປັນຄັ້ງທີ່ 2 ແລະ ບັນລຸໄດ້ທັງ 3 ເງື່ອນໄຂ ແລະ ສືບຕໍ່ຜ່ານເກນຈົນຮອດປັດຈຸບັນ.
- ສະນັ້ນ, ສປປ ລາວ ຖືກກໍານົດໃຫ້ອອກຈາກ ສະຖານະພາບດ້ອຍພັດທະນາ ໃນປີ

# 2. ສະພາບເສດຖະກິດ ແລະ ການພັດທະນາຂອງ ສປປ ລາວ ໂດຍຫຍໍ້









# 2. ສະພາບເສດຖະກິດ ແລະ ການພັດທະນາຂອງ ສປປ ລາວ ໂດຍຫ (ຕໍ່)

ແຫຼ່ງຂໍ້ມູນ: ກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ




ແຫຼ່ງຂໍ້ມູນ: ກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ



# 3. ການຈັດຕັ້ງປະຕິບັດວຽກງານ LDC ໄລຍະຜ່ານ

## ພາບລວມບັນດາປະເທດດ້ອຍພັດທະນາໃນປັດຈຸບັນ

- ປັດຈຸບັນ, ປະເທດດ້ອຍພັດທະນາມີ 44 ປະເທດ.
- ກວມເອົາອັດຕາຄວາມທຸກຍາກຂອງໂລກ ປະມານ 40%.
- ປະຊາກອນປະມານ: 1.16 ຕື້ຄົນ (2023).
- ມີ 8 ປະເທດຫຼຸດພົ້ນຈາກສະຖານະພາບ LDC.
- (ຂໍ້ມູນຈາກ OHRLLS & World Bank)



# 3. ການຈັດຕັ້ງປະຕິບັດວຽກງານ LDC ໄລຍະຜ່ານມາ (ຕໍ່)
## ການປະເມີນຕໍ່ກັບ 03 ເງື່ອນໄຂການອອກຈາກສະຖານະພາບ LDC ຂອງ ສປປ ລາວ ຜ່ານມາ

Table 2. Indicators for LDC Identification, Lao PDR, 2020-2024.

| | HAI | EVI | GNI per capita |
|---|---|---|---|
| 2020 | 71.8 | 29.8 | 2,268 |
| 2021 | 72.6 | 29.8 | 2,408 |
| 2022 | 73.7 | 29.7 | 2,511 |
| 2023 | 74.2 | 29.5 | 2,550 |
| 2024 | 74.8 | 29.8 | 2,503 |

| 2025 | HAI | EVI | GNI per capita |
|---|---|---|---|
| 2025 | 75.30 | 30.58 | 2,375 |
| Threshold | > 66 | < 32 | > 1,306 |



# 3. ການຈັດຕັ້ງປະຕິບັດວຽກງານ LDC ໄລຍະຜ່ານມ (ຕໍ່)

- ຍ້ອນການລະບາດຂອງພະຍາດໂຄວິດ-19 ແລະ ສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ, ການເງິນ ແລະ ວິກິດການຕ່າງໆໃນພາກພື້ນ ແລະ ໃນໂລກ, ສະມັດຊາໃຫ່ຍ ສປຊ ຈຶ່ງໄດ້ຮັບຮອງເອົາຍັດຕິເລກທີ A/RES/76/8, ລົງວັນທີ 29 ພະຈິກ 2021 ຂະຫຍາຍໄລຍະເວລາຂ້າມຜ່ານອອກຈາກສະຖານະພາບດັ່ງກ່າວຈາກປົກກະຕິ 3 ປີ ອອກເປັນ 5 ປີ.
- ໝາຍຄວາມວ່າ ສປປ ລາວ ຖືກກຳນົດໃຫ້ອອກຈາກສະຖານະພາບ LDCs ໃນປີ 2026.






# 3. ການຈັດຕັ້ງປະຕິບັດວຽກງານ LDC ໄລຍະຜ່ານມາ (ຕໍ່)

- ສະນັ້ນ, ໃນເດືອນ ທັນວາ 2023, ສປປ ລາວ ໄດ້ສຳເລັດການສ້າງແຜນຍຸດທະສາດການຂ້າມຜ່ານຂອງເພື່ອອອກຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2026 ແລະ ຫຼັງປີ 2026 (STS) ໂດຍການຮ່ວມມືກັບ ອົງການ ສປຊ.
- ຈຸດປະສົງຫຼັກຂອງແຜນຍຸດທະສາດດັ່ງກ່າວແມ່ນ **ເພື່ອຮັບປະກັນໃຫ້ແກ່ການອອກຈາກສະຖານະພາບປະເທດດ້ອຍພັດທະນາຢ່າງໂລ່ງລ່ຽນ, ມີຄຸນນະພາບ ແລະ ຍືນຍົງ.**



# 3. ການຈັດຕັ້ງປະຕິບັດວຽກງານ LDC ໄລຍະຜ່ານມ (ຕໍ່)

- ປັດຈຸບັນ, ສປປ ລາວ ໂດຍຮ່ວມກັບ ສປຊ ພວມດຳເນີນການເຮັດບົດປະເມີນຄວາມພ້ອມ ຂອງ ສປປ ລາວ ເພື່ອປະເມີນຄືນຄວາມພ້ອມ ໃນດ້ານຕ່າງໆ ໃນການອອກຈາກສະຖານະພາບດັ່ງກ່າວ, ເຊິ່ງຄາດວ່າຈະສຳເລັດໃນທ້າຍປີ 2025 ນີ້.



# ການເຄື່ອນໄຫວພົ້ນເດັ່ນ ແລະ ກອງປະຊຸມສຳຄັນຕ່າງໆ ໄລຍະຜ່ານມາ

**ການຢ້ຽມຂໍ່ານັບ ຂອງ ທ່ານ ເລຂາທິການໃຫຍ່ອົງການ ສປຊ ຕໍ່ກັບ ທ່ານ ປະທານປະເທດ ແຫ່ງ ສປປ ລາວ ໃນເດືອນ ຕຸລາ 2024, ໃນໄລຍະການເຂົ້າຮ່ວມ ກອງປະຊຸມສຸດຍອດ ອາຊຽນ-ສປຊ ຄັ້ງທີ 14 ທີ່ ນະຄອນຫຼວງ ວຽງຈັນ.**



# ການເຄື່ອນໄຫວພົ້ນເດັ່ນ ແລະ ກອງປະຊຸມສຳຄັນຕ່າງໆ
# ໄລຍະຜ່ານມາ (ຕໍ່)

ການເດີນທາງມາຢ້ຽມຢາມເຮັດວຽກຢ່າງເປັນທາງການ ຢູ່ ສປປ ລາວ ຂອງ ທ່ານ ນ. ຣາບັບ ຟາຕິມາ, ຮອງເລຂາທິການໃຫຍ່ອົງການ ສປຊ, ໂດຍຕອບສະໜອງການເຊື້ອເຊີນຂອງ ລັດຖະບານ ສປປ ລາວ, ໃນເດືອນ ເມສາ 2025.





# ການເຄື່ອນໄຫວພົ້ນເດັ່ນ ແລະ ກອງປະຊຸມສຳຄັນຕ່າງໆ ໄລຍະຜ່ານມາ (ຕໍ່)






**ກອງປະຊຸມຄະນະຊີ້ນຳລະດັບຊາດ ເພື່ອການຈັດຕັ້ງປະຕິບັດແຜນດຳເນີນງານ ຂອງ ສປຊ ສຳລັບປະເທດດ້ອຍພັດທະນາ, ໃນເດືອນ ເມສາ 2025**

**"Graduation from LDCs status should be incentivised, not punishment"**

# ການຈັດຕັ້ງປະຕິບັດແຜນຍຸດທະສາດ STS

ຈຸດປະສົງການສ້າງຍຸດທະສາດ STS ແມ່ນເພື່ອ:

1. ຮັບປະກັນວ່າ ການສູນເສຍການສະໜັບສະໜູນດ້ານນະໂຍບາຍພິເສດສຳລັບ LDC ຈະບໍ່ສົ່ງຜົນກະທົບຕໍ່ການພັດທະນາໂດຍລວມຂອງປະເທດ;
2. ການນຳໃຊ້ມາດຕະການສະໜັບສະໜູນສະເພາະປະເທດ LDC ຂອງສາກົນ ຈະຖືກນຳໃຊ້ຢ່າງມີປະສິດທິຜົນສູງສຸດ ໃນໄລຍະທີ່ຍັງສາມາດນຳໃຊ້ໄດ້ຢູ່;
3. ມາດຕະການສະໜັບສະໜູນ ແລະ ຊ່ວຍເຫຼືອດ້ານຕ່າງໆ ໄດ້ຖືກກຽມພ້ອມໃນໄລຍະກະກຽມໃຫ້ແກ່ການຫຼຸດພົ້ນ ເພື່ອຮັບປະກັນຄວາມພ້ອມທີ່ດີ, ໂດຍສະເພາະແມ່ນການພັດທະນາຄວາມອາດສາມາດດ້ານການຜະລິດ, ການເຈລະຈາສັນຍາການຄ້າ ແລະ ການລົງທຶນເຂົ້າໃນການພັດທະນາຊັບພະຍາກອນມະນຸດ, ການປົກປັກຮັກສາສິ່ງແວດລ້ອມ ແລະ ສ້າງຄວາມຍືນຍົງໃຫ້ແກ່ເສດຖະກິດ;
4. ການສ້າງຍຸດທະສາດຂ້າມຜ່ານ ຍັງເປັນການປະກອບສ່ວນໃນການຈັດຕັ້ງປະຕິບັດຄວາມໝາຍໝັ້ນຕໍ່ກັບວາລະຂອງສາກົນ ກໍຄື ການຈັດຕັ້ງປະຕິບັດແຜນປະຕິບັດງານໂດຮາສຳລັບປະເທດດ້ອຍພັດທະນາ (Doha Programme of Action 2022-2031).



# ການຈັດຕັ້ງປະຕິບັດແຜນຍຸດທະສາດ STS (ຕໍ່)

## 3 ເປົ້າໝາຍ ແລະ 4 ຫຼັກການ

1

**ໂລ່ງລ່ຽນ**

ນະໂຍບາຍ ແລະ ໜ້າວຽກໃໝ່ ທີ່ຈະຊ່ວຍແກ້ໄຂຜົນກະທົບທີ່ອາດຈະເກີດຂຶ້ນ ແລະ ໝູນໃຊ້ກາລະໂອກາດຈາກການຫຼຸດພົ້ນ

2

**ຄຸນນະພາບ**

ນະໂຍບາຍທີ່ຈຳເປັນ ເພື່ອຮັບປະກັນການບັນລຸເປົ້າໝາຍຂອງ ແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ ໑

3

**ຍືນຍົງ**

ແນວທາງນະໂຍບາຍ ສໍາລັບໄລຍະເວລາທີ່ເຫຼືອເພື່ອຄວາມກ້າວໜ້າໃນການຈັດຕັ້ງປະຕິບັດ ປພຍ ແລະ ຫຼີກລ້ຽງການກັບຄືນສູ່ສະຖານະພາບເກົ່າ ພາຍຫຼັງຈາກການຫຼຸດພົ້ນ

| | | | |
|---|---|---|---|
| **ຄວາມເປັນເຈົ້າການຂອງປະເທດ** | **ຄວາມສອດຄ່ອງທາງດ້ານນະໂຍບາຍ** | **ການປະສານງານລະຫວ່າງກະຊວງ** | **ການຕິດຕາມທີ່ມີປະສິດທິພາບ ແລະ ສອດຄ່ອງ** |

# ການຈັດຕັ້ງປະຕິບັດແຜນຍຸດທະສາດ STS (ຕໍ່)

**ກຳນົດ 4 ເສົາຄ້ຳບູລິມະສິດ ແລະ ລວມເອົາ 9 ຂົງເຂດນະໂຍບາຍ:**

### ການສ້າງເສດຖະກິດມະຫາພາກໃຫ້ມີຄວາມສະຖຽນລະພາບ ແລະ ການເງິນທີ່ຍືນຍົງ

1. ສະຖຽນລະພາບທາງດ້ານເສດຖະກິດມະຫາພາກ.
2. ການຮັບປະກັນການລົງທຶນເຂົ້າໃນຊັບສິນມະນຸດ, ສິ່ງແວດລ້ອມ ແລະ ແຜນງານດ້ານດິນຟ້າອາກາດ.

### ການຄ້າ ແລະ ການລົງທຶນ

1. ການສົ່ງເສີມການຄ້າ ແລະ ການລົງທຶນຈາກຕ່າງປະເທດ.
2. ການປັບປຸງສະພາບແວດລ້ອມທາງດ້ານທຸລະກິດເພື່ອການເຕີບໂຕທີ່ທົ່ວເຖິງ.

### ການພັດທະນາຊັບສິນມະນຸດ ແລະ ການຫັນປ່ຽນໂຄງສ້າງເສດຖະກິດ

1. ການພັດທະນາຊັບສິນມະນຸດ ແລະ ວຽກເຮັດງານທຳທີ່ດີ.
2. ການພັດທະນາຊົນນະບົດ.
3. ການພັດທະນາຕົວເມືອງ.

### ການຄຸ້ມຄອງບັນຫາການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ

1. ການຄຸ້ມຄອງຊັບພະຍາກອນທຳມະຊາດ ໃນລັກສະນະເຊື່ອມສານ ແລະ ສອດຄ່ອງກັບວຽກງານດິນຟ້າອາກາດ.
2. ການສ້າງຄວາມເຂັ້ມແຂງວຽກງານຄຸ້ມຄອງການປ່ຽນແປງດິນຟ້າອາກາດ ແລະ ຫຼຸດຜ່ອນຄວາມສ່ຽງດ້ານໄພພິບັດ.

# ການຈັດຕັ້ງປະຕິບັດແຜນຍຸດທະສາດ STS (ຕໍ່)

❖ **ບັນດາຂະແໜງການຫຼັກໃນການຈັດຕັ້ງປະຕິບັດແຜນຍຸດທະສາດ STS ມີຄື:**

1. ກະຊວງການເງິນ (ລວມທັງ ກະຊວງແຜນການ ແລະ ການລົງທຶນ ໃນເມື່ອກ່ອນ);
2. ກະຊວງອຸດສາຫະກໍາ ແລະ ການຄ້າ;
3. ກະຊວງກະສິກໍາ ແລະ ສິ່ງແວດລ້ອມ (ລວມທັງ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໃນເມື່ອກ່ອນ);
4. ກະຊວງສາທາລະນະສຸກ;
5. ກະຊວງສຶກສາທິການ ແລະ ກິລາ;
6. ກະຊວງໂຍທາທິການ ແລະ ຂົນສົ່ງ;
7. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
8. ສູນກາງສະຫະພັນແມ່ຍິງລາວ;
9. ສູນສະຖິຕິແຫ່ງຊາດ;
10. ສະຖາບັນຄົ້ນຄວ້າວິໄຈການພັດທະນາ;
11. ກະຊວງການຕ່າງປະເທດ (ຈຸດປະສານງານ).

➢ ໃນຕໍ່ໜ້າອາດຈະຕ້ອງໄດ້ເພີ່ມຈຸດປະສານງານຂັ້ນທ້ອງຖິ່ນຕື່ມ.

# ບາງບົດຮຽນສຳຄັນຈາກ ປະເທດ ພູຖານ ແລະ ມານດີວ ພາຍຫຼັງອອກຈາກ LDCs

1. ການປະຕິຮູບນະໂຍບາຍພາຍໃນ;
2. ມາດຕະການໃນການຮັກສາອັດຕາການເຕີບໂຕຂອງເສດຖະກິດ;
3. ມາດຕະການຈັດເກັບລາຍຮັບທີ່ມີປະສິດທິພາບ;
4. ການພັດທະນາຊັບພະຍາກອນມະນຸດ;
5. ຮັກສາມາດຕະຖານການດຳລົງຊີວິດຂອງປະຊາຊົນ ແລະ ການແກ້ໄຂອັດຕາວ່າງງານ;
6. ການແກ້ໄຂບັນຫາສິ່ງແວດລ້ອມ;
7. ການພັດທະນາພາກເອກະຊົນ;
8. ການຂະຫຍາຍການເຂົ້າເຖິງຕະຫຼາດທີ່ກວ້າງຂຶ້ນ ໂດຍອີງໃສ່ທ່າແຮງບົ່ມຊ້ອນ;
9. ການສືບຕໍ່ຊ່ວຍເຫຼືອຈາກສາກົນ.

# ກາລະໂອກາດໃນການອອກຈາກສະຖານະພາບ ດ້ອຍພັດທະນາ ຂອງ ສປປ ລາວ

- ສະແດງໃຫ້ເຫັນເຖິງຄວາມໝາຍໝັ້ນ ຂອງ ພັກ-ລັດຖະບານ ສປປ ລາວ ໃນການພັດທະນາສ້າງສາປະເທດຊາດ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າໃຫ້ນັບມື້ນັບດີຂຶ້ນ.
- ສອດຄ່ອງກັບເປົ້າໝາຍລວມຂອງ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX, ສອດຄ່ອງກັບມະຕິຂອງກົມການເມືອງສູນກາງພັກ ເລກທີ 04/ກມສພ ວ່າດ້ວຍການສ້າງເສດຖະກິດ ເອກະລາດເປັນເຈົ້າຕົນເອງ ຫຼື ສອຈ.
- ຈະເປັນຈຸດເລີ່ມຕົ້ນການພັດທະນາຂອງ ສປປ ລາວ ໃນໄລຍະໃໝ່ ເພື່ອກ້າວໄປເປັນປະເທດກຳລັງພັດທະນາ ແລະ ກ້າວຈາກປະເທດທີ່ມີລາຍຮັບຕ່ຳໄປເປັນປະເທດທີ່ມີລາຍຮັບກາງຕ່ຳ.



# ກາລະໂອກາດໃນການອອກຈາກສະຖານະພາບດ້ອຍພັດທະນາ ຂອງ ສປປ ລາວ (ຕໍ່)

- ຍົກລະດັບການຮ່ວມມື ແລະ ສ້າງຄູ່ຮ່ວມງານທາງດ້ານເສດຖະກິດ ແລະ ການຄ້າໃໝ່.
- ກຽມພ້ອມໃນການແຂ່ງຂັນດ້ານການຄ້າທັງພາຍໃນ ແລະ ສາກົນຫລາຍຂຶ້ນ, ສົ່ງເສີມການນໍາໃຊ້ເຕັກໂນໂລຊີ ແລະ ນະວັດຕະກໍາຫຼາຍຂຶ້ນ, ເສີມສ້າງມາດຕະຖານຄຸນນະພາບ, ປັບປຸງສະພາບແວດລ້ອມທຸລະກິດ ແລະ ພັດທະນາຄວາມສາມາດໃນການສົ່ງອອກ.
- ພາບພົດ ຂອງ ສປປ ລາວ ດີຂຶ້ນ ແລະ ບັນຍາກາດຂອງການລົງທຶນຈາກສາກົນ ໄດ້ຮັບຄວາມເຊື່ອໝັ້ນ ເຊິ່ງຈະດຶງດູດການລົງທຶນຈາກຕ່າງປະເທດເພີ່ມຂຶ້ນ (FDI) ຄືກັບ ປະເທດທີ່ໄດ້ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາແລ້ວ.





# ຄາດຄະເນຜົນກະທົບ ແລະ ສິ່ງທ້າທາຍ

## ດ້ານການຄ້າ

- ການເຂົ້າເຖິງຕະຫຼາດ EU ປ່ຽນຈາກຜົນປະໂຫຍດໃນທຸກດ້ານ ຍົກເວັ້ນອາວຸດໂທປະກອນ (Everything But Arms) ມາເປັນ ລະບົບສິດທິພິເສດທາງດ້ານການຄ້າແບບເພີ່ມເຕີມເງື່ອນໄຂ ສໍາລັບປະເທດກໍາລັງພັດທະນາ (GSP Plus Scheme).
- ສໍາລັບອົງການການຄ້າໂລກ (WTO), ສປປ ລາວ ຈະບໍ່ສາມາດເຂົ້າເຖິງ ບາງຜົນປະໂຫຍດ ແລະ ບາງເງື່ອນໄຂການສະໜັບສະໜູນການຄ້າພາຍໃຕ້ຂອບ ແລະ ຂໍ້ຕົກລົງຂອງອົງການ WTO ລວມທັງເສຍບາງສິດທິພິເສດຂອງ LDC ໃນຂອບ WTO.

## ດ້ານການຮ່ວມມື ເພື່ອການພັດທະນາ

- ການສູນເສຍບາງສິດທິພິເສດໃນການເຂົ້າເຖິງທຶນຊ່ວຍເຫຼືອລ້າ ແລະ ສິດທິເງິນກູ້ຢືມທີ່ມີອັດຕາດອກເບ້ຍຕໍ່າ, ການຊ່ວຍເຫລືອເພື່ອການພັດທະນາ (ODA) ຈະຫຼຸດລົງ.
- ການສູນເສຍການເຂົ້າເຖິງກອງທຶນສໍາລັບປະເທດດ້ອຍພັດທະນາ (LDC Fund) ເຊັ່ນ: ກອງທຶນການປ່ຽນແປງດິນຟ້າອາກາດ, ທະນາຄານເຕັກໂນໂລຊີ ແລະ ໂຄງການສະໜັບສະໜູນການລົງທຶນສໍາລັບປະເທດດ້ອຍພັດທະນາ.

## ດ້ານປົ່ນອ້ອມອື່ນໆ

- ການສະໜັບສະໜູນອັດຕາເດີນທາງເຂົ້າຮ່ວມກອງປະຊຸມສາກົນຫຼຸດລົງ ແລະ ສ່ວນຫຼຸດໃນການປະກອບສ່ວນງົບປະມານພັນທະໃຫ້ແກ່ ອົງການ ສປຊ.
- ການເພີ່ມຂຶ້ນຂອງການຈ່າຍເງິນພັນທະປະກອບສ່ວນ.

# 4. ການຈັດຕັ້ງປະຕິບັດແຜນດຳເນີນງານ ໂດຮາ ສຳລັບປະເທດດ້ອຍພັດທະນາ ຂອງ ສປປ ລາວ.

- ສປປ ລາວ ໄດ້ເຊື່ອມສານເອົາແຜນດຳເນີນງານໂດຮາ (DPoA) ກໍຄືແຜນດຳເນີນງານ ອິດສະຕັນບູ (IPoA) ໃນເມື່ອກ່ອນ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ, ໂດຍສະເພາະແມ່ນ 06 ເສົາຄ້ຳຂອງ DPoA:

1. ການລົງທຶນຕໍ່ກັບຄົນ;
2. ການນຳໃຊ້ປະໂຫຍດຈາກວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ;
3. ການສົ່ງເສີມການປ່ຽນແປງໂຄງສ້າງຂອງເສດຖະກິດ;
4. ການເພີ່ມທະວີການຄ້າລະຫວ່າງປະເທດ ແລະ ການເຊື່ອມໂຍງພາກພື້ນ;
5. ການຮັບມືກັບການປ່ຽນແປງດິນຟ້າອາກາດ ແລະ ສ້າງຄວາມທົນທານ;
6. ການເພີ່ມທະວີການຮ່ວມມືສາກົນ ແລະ ດ້ານການເງິນ.



# 5. ທິດທາງໃນຕໍ່ໜ້າ

1. ສືບຕໍ່ຈັດຕັ້ງປະຕິບັດ, ເຊື່ອມສານ ແລະ ຕິດຕາມການຈັດຕັ້ງປະຕິບັດແຜນຍຸດທະສາດ STS, ໂດຍສົມທົບກັບທຸກຂະແໜງການກ່ຽວຂ້ອງ.
2. ຈັດຕັ້ງປະຕິບັດມະຕິເລກທີ 04 ຂອງ ກົມການເມືອງສູນກາງພັກ ວ່າດ້ວຍການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ຫຼື ສອຈ.
3. ສືບຕໍ່ຮ່ວມມືກັບອົງການ ສປຊ ແລະ ຄູ່ຮ່ວມພັດທະນາ ເພື່ອຕິດຕາມການພັດທະນາ ສປປ ລາວ ໂດຍຜ່ານກົນໄກການຕິດຕາມການປະເມີນຜົນແບບຍົກລະດັບ ຂອງ ສປຊ (Enhanced Monitoring Mechanism / EMM).
4. ເພີ່ມທະວີການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ ໃຫ້ຫຼາຍຂຶ້ນ ເພື່ອລະດົມຂົນຂວາຍການປະກອບສ່ວນດ້ານທຶນຮອນ ແລະ ການມີສ່ວນຮ່ວມຂອງພາກເອກະຊົນເຂົ້າໃນການພັດທະນາປະເທດໃຫ້ຫຼາຍຂຶ້ນ, ສ້າງຕັ້ງກອງທຶນພາຍໃນເພື່ອ ສົບທົບກັບ ທຶນຊ່ວຍເຫຼືອ ODA ຈາກສາກົນ.
5. ເອົາໃຈໃສ່ຢ່າງແຂງແຮງໃນການພັດທະນາແບບຍືນຍົງ, ເອົາປະຊາຊົນເປັນໃຈກາງ ແລະ ເປັນມິດຕໍ່ສິ່ງແວດລ້ອມ.

# ຂໍ້ສະເໜີຕໍ່ກັບບັນດາຄູ່ຮ່ວມພັດທະນາ

1. ຮຽກຮ້ອງໃຫ້ບັນດາຄູ່ຮ່ວມພັດທະນາສືບຕໍ່ສະໜັບສະໜູນ ດ້ານທຶນຮອນ, ເຕັກນິກວິຊາການ ແລະ ອື່ນໆ ເພື່ອສືບຕໍ່ ຊ່ວຍເຫຼືອ ສປປ ລາວ ໃນໄລຍະຂ້າມຜ່ານ 2027-2029;
2. ສະເໜີຂໍການສະໜັບສະໜູນການເຂົ້າເຖິງຕະຫຼາດການຄ້າ ແລະ ບັນດາສິດທິພິເສດຕ່າງໆແກ່ ສປປ ລາວ ໃນໄລຍະຂ້າມຜ່ານ ເຊັ່ນ: ມາດຕະການເຂົ້າເຖິງການຄ້າແບບສິດທິພິເສດ (Everything But arms) ຂອງຕະຫຼາດເອີຣົບ ແລະ ຕະຫຼາດອື່ນໆຢູ່ໃນພາກພື້ນ ແລະ ຂອງໂລກ;
3. ຕໍ່ກັບການສູນເສຍສິດທິພິເສດພາຍໃຕ້ລະບຽບຂອງ WTO ແມ່ນສະເໜີໃຫ້ຊ່ວຍຊຸກຍູ້ໃຫ້ມີມາດຕະການສະໜັບສະໜູນໃຫ້ແກ່ ສປປ ລາວ ໃນໄລຍະຂ້າມຜ່ານ ໄລຍະ 6 ຫາ 9 ປີ ພາຍຫຼັງຫຼຸດພົ້ນອອກຈາກ LDCs.
4. ສະເໜີໃຫ້ສືບຕໍ່ຊ່ວຍເຫຼືອສ້າງຄວາມອາດສາມາດດ້ານການຄ້າ, ການຝຶກອົບຮົມ ແລະ ການສະໜັບສະໜູນດ້ານເຕັກນິກການຄ້າຕ່າງໆໃຫ້ແກ່ ສປປ ລາວ.
5. ການສ້າງຂີດຄວາມສາມາດໃຫ້ແກ່ພາກສ່ວນກ່ຽວຂ້ອງຕ່າງໆຂອງ ສປປ ລາວ ເພື່ອຊອກຫາແຫຼ່ງທຶນອື່ນໆທີ່ຫຼາກຫຼາຍ.
6. ສະເໜີໃຫ້ສືບຕໍ່ຊ່ວຍເຫຼືອ ສປປ ລາວ ໃນການເຂົ້າຮ່ວມກອງປະຊຸມສຳຄັນຂອງສາກົນຕ່າງໆ ໃນໄລຍະຂ້າມຜ່ານພາຍຫຼັງປີ 2026.

# ພາກມ້ອນທ້າຍ

- ສໍາລັບ ສປປ ລາວ, ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາຢ່າງໂລ່ງລ່ຽນ, ມີຄຸນນະພາບ ແລະ ຍືນຍົງ ແມ່ນຄາດໝາຍສູ້ຊົນໄລຍະຍາວຂອງພັກ ແລະ ລັດຖະບານ, ແລະ ການຜ່ານເກນການປະເມີນການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນໄລຍະທີ່ຜ່ານມາສະແດງເຖິງຄວາມໝາຍໝັ້ນອັນໜັກແໜ້ນ ແລະ ຕັ້ງໜ້າຂອງ ສປປ ລາວ ໃນການຈັດຕັ້ງຜັນຂະຫຍາຍວາລະສາກົນ.
- ເຖິງຢ່າງໃດກໍ່ຕາມ, ການທີ່ ສປປ ລາວ ສາມາດຜ່ານເກນການປະເມີນເພື່ອຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ກໍ່ບໍ່ໄດ້ໝາຍຄວາມວ່າ ພາລະກິດໃນການລຶບລ້າງຄວາມທຸກຍາກຈະສິ້ນສຸດລົງ ແລະ ກໍ່ບໍ່ໄດ້ໝາຍຄວາມວ່າທຸກຄົນໃນຊາດຈະຮັ່ງມີຂຶ້ນໃນທັນທີທັນໃດ, ແຕ່ຫາກເປັນການສ່ອງແສງໃຫ້ເຫັນເຖິງຜົນສໍາເລັດ ແລະ ຂີດໝາຍທີ່ສໍາຄັນຍິ່ງໃນຂະບວນການພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາ ພາຍໃຕ້ການນໍາພາຊີ້ນໍາຂອງ ພັກ ແລະ ລັດຖະບານແຫ່ງ ສປປ ລາວ.

# ຂໍຂອບໃຈ